# 2016 Cost-Participant's Contribution Policy

*Special Access Program*

## ນະໂຍບາຍວ່າດ້ວຍອັດຕຣາຄ່າທັມນຽມ ຈ່າຍສົມທົບຄ່າໃຊ້ບໍຣິການ ນຳໂຄງການ ຊ່ວຍໃຫ້ເຂົ້າເຖິງສວັດດີການຕ່າງໆໃນສັງຄົມ ປີ 2016

Beginning **01/01/2016**, the cost to serve on Lao Advancement Organization of America (LAOA) Special Access Program (SA) will now be based on the age **60** or older participant' s gross income level. The participant' s income level will held in strict confidence. Every effort will be made to maintain confidentiality when the participant pays for their service whether it is in the office, payment through the mail or any other form of payment.

ເລີ້ມຕົ້ນແຕ່ວັນທີ 1 ເດືອນມົກກະຣາ ປີ 2016 ເປັນຕົ້ນໄປ ຄ່າໃຊ້ບໍຣິການນຳຂອງໂຄງການຊ່ວຍໃຫ້ເຂົ້າເຖິງສວັດດີການຕ່າງໆນຳສັງຄົມຂອງຜູ້ສູງອາຍຸຂອງອົງການລາວເພື່ອຄວາມກ້າວໜ້າໃນສະຫະຣັຖ (ລາວ-ອາເມຣິກາ) ຈະໄດ້ຄິດໄລ່ວາງອັດຕຣາໃໝ່ ໂດຽອີງໃສ່ຣະດັບລາຍຮັບຂອງຜູ້ໃຊ້ບໍຣິການທີ່ມີອາຍຸແຕ່ 60 ປີ ຂື້ນໄປເປັນພື້ນຖານ. ຣະດັບລາຍຮັບຂອງຜູ້ໂດຽສານ ທາງອົງການລາວ-ອາເມຣິກາ ຈະຮັກສາໄວ້ເປັນຄວາມລັບຢ່າງເຄັ່ງຄັດ ແລະຈະໃຊ້ທຸກຄວາມພຍາຍາມຮັກສາຄວາມລັບ ໃນເມື່ອຜູ້ໃຊ້ບໍຣິການໄດ້ຈ່າຍຄ່າບໍຣິການຂອງຕົນ ບໍ່ວ່າຈະຈ່າຍໃນເວລາທີ່ກຳລັງຢູ່ຫ້ອງການ, ຫຼືຈ່າຍຜ່ານທາງໄປສນີ ຫຼືໃນຮູບແບບອື່ນໆກໍຕາມ.

A participant' s income level will be based on self-reported income of the age **60** or older adult service recipient.  Personal assets, saving or other property are not to be considered. No form of income verification is allowed. A means test will not be utilized to determine eligibility for service. ***A LAOA Staff member will be contacting you soon to verbally update your household income information in our database.*** The true cost of an unit (1 Unit = 1 hour) on LAOA is **$7.38**. LAOA will ask the age **60** and older participant to contribute as s(he) can.

ຣະດັບລາຍຮັບຂອງຜູ້ໃຊ້ບໍຣິການ ຈະອີງໃສ່ການໃຫ້ຂໍ້ມູນຕົວຈິງຂອງຜູ້ໂດຽສານເອງ. ຊັບສົມບັດຂອງສ່ວນບຸກຄົນ, ຊັບອອມສິນ ຫຼືຊັບສິນໃດໆທີ່ເປັນກັມມະສິດ ຈະບໍ່ໄດ້ຮັບການພິຈາຣະນາໃຫ້ຖາມເຖິງໄດ້. ຈະບໍ່ອະນຸຍາດໃຫ້ມີໂຄງຮ່າງເອກກະສານໃດໆໃຫ້ປະກອບ ເພື່ອເປັນການກວດກາເບິ່ງລາຍໄດ້. ຫມາຍເຖິງມີການທົດສອບອັນນຶ່ງ ກໍບໍ່ອະນຸຍາດໃຫ້ໄດ້ນຳໃຊ້ ເພື່ອເປັນການກຳນົດເຖິງຄວາມເໝາະສົມ ແລະການມີສິດທີ່ຈະໄດ້ຮັບການບໍຣິການ. <u>ພນັກງານຂອງ ລາວ-ອາເມຣິກາ ຈະໄດ້ຕິດຕໍ່ພົວພັນກັບທ່ານ ແລະຖາມເຖິງຂໍ້ມູນລາຍໄດ້ ເພື່ອອັບເດດຣະບົບຂໍ້ມູນຂອງທາງອົງການພວກເຮົາ</u>. ຣາຄາຕົວຈິງໃນການການບໍຣິການ ຫນຶ່ງຊົ່ວໂມງຂອງ ລາວ-ອາເມຣິກາ ຕົກຢູ່ປະມານ 7.38 ດອນລາສະຫະຣັຖ. ອົງການ ລາວ-ອາເມຣິກາຈະຮ້ອງຂໍໃຫ້ຜໃຊ້ບໍຣິການທີ່ມີອາຍຸ 60 ປີຂື້ນໄປ ໄດ້ຈ່າຍສົມທົບຄ່າໃຊ້ບໍຣິການ ຫຼືບໍຣິຈາກຕາມຄວາມສາມາດເທົ່າທີ່ຈະບໍຣິຈາກໄດ້.

If you can' t afford this service due to the payment schedule listed above, please note no one will be denied service due to inability to pay. Please contribute what you can afford.

ຖ້າຫາກທ່ານບໍ່ອາດສາມາດ ຈ່າຍຄ່າບໍຣິການຕາມອັດຕຣາທີ່ບົ່ງບອກໄວ້ໃນຕາຕະລາງຂ້າງເທິງນັ້ນ, ໂປຼດໄດ້ຮັບຊາບວ່າໄວ້ວ່າ ຈະບໍ່ມີໃຜຜູ້ໃດທີ່ຈະລົບລ້າງບໍ່ໃຫ້ການບໍຣິການແກ່ທ່ານໄດ້ ຍ້ອນວ່າທ່ານບໍ່ມີຄວາມອາດສາມາດຈະຈ່າຍໃຫ້ໄດ້. ກະຣຸນາໃຫ້ການບໍຣິຈາກ ເທົ່າທີ່ທ່ານຈະສາມາດຈ່າຍໄດ້.

**DIRECT ALL QUESTIONS REGARDING THIS POLICY TO** ທຸກໆຄຳຖາມທີ່ທ່ານມີ ກ່ຽວພັນກັບນະໂຍບາຍດັ່ງກ່າວ, ກະຣຸນາຕິດຕໍ່ ແລະພົວພັນໂດຽກົງກັບ Dr. Khamchanh Phanthavong, Executive Director of the Lao Advancement Organization of America ດຣ. ຄຳຈັນ ພັນທະວົງ, ຜູ້ອຳນວຍການອົງການລາວເພື່ອຄວາມກ້າວໜ້າໃນສະຫະຣັຖ (ລາວ-ອາເມຣິກາ
612.302.9154 or khphanthavong@laoamerica.org